

# ອານາຈັກບິນບິນ

เนื้อหา หน้า 1

ອານາຈັກນ້ອຍໆ ທີ່ມີປະຊາກອນຫຼວງຫຼາຍແຫ່ງນີ້ ໄດ້ມີການຄ້າລັງຄົງຕົວ ແລະຂະຫຍາຍຕົວມານານຫຼາຍປີ ຈົນນັບບໍ່ຖ້ວນ. ເວົ້າໂດຍທົ່ວໄປແລ້ວ ຊີວິດການເປັນຢູ່ ຕະຫຼອດເຖິງສິດທິຕ່າງໆ ທີ່ຄວນມີຂອງພົນລະເມືອງ ຖືວ່າມີການຮັບປະກັນ ຄືດັ່ງປະເທດທີ່ມີການພັດທະນາແລ້ວທັງຫຼາຍ ດັ່ງນັ້ນ ເລື່ອງລາວຊຸບຊິບກິນເຂົ້າໂຕໄລຄວາມເພີ່ນ ເຊິ່ງເຄີຍພົດພື້ນັ້ນໃນສັງຄົມ ຈຶ່ງບໍ່ຄ່ອຍປາກົດໃຫ້ເຫັນໃນໜ້າໜັງສືພິມ ຫຼືສື່ຕ່າງໆ. ບັນຫາການປ້າໄມ້ທຳລາຍປ່າ ບັນຫາມົນລະພິດ ຫຼືສະພາບແວດລ້ອມລວມ ເຊິ່ງມັກເກີດຂຶ້ນກັບຫຼາຍໆປະເທດນັ້ນ ກົງກັນຂ້າມກັບອານາຈັກບິນບິນນີ້ ບໍ່ເຄີຍມີເລີຍ. ປະຊາກອນທົ່ວທັງປະເທດ ເປັນເປັນຜູ້ຮັກຫອມທຳມະຊາດ ແລະສິ່ງແວດລ້ອມ ໂດຍສະເພາະເປັນຜູ້ຫຼົງໄຫຼໃນລະເໜຫາແຫ່ງບຸບຜາຊາດນານາພັນ ແລະກ່າວປະນາມຜູ້ທຳລາຍສິ່ງດັ່ງກ່າວ.

ພວກເຂົາເຂົ້າໃຈວ່າມະນຸດຄົງຕົວ ແລະ ຂະຫຍາຍຕົວບໍ່ແມ່ນໃນທີ່ຫວ່າງເປົ່າຫຼືສູນຍາກາດແຕ່ປະການໃດ ຄວາມຈິງກໍແມ່ນຢູ່ໃນທຳມະຊາດເຊັ່ນດຽວກັບ ສັດສາວາສິ່ງ ຕົ້ນໄມ້ໃບຫຍ້າອື່ນໆ ເໜືອຜູ້ອື່ນແມ່ນມະນຸດຮູ້ຈັກນຳເອົາສິ່ງທີ່ທຳມະຊາດຊຸກເຊື່ອງໄວ້ມາຮັບໃຊ້ຕົນເອງ ດ້ວຍວິທີການຕ່າງໆ ເມື່ອມະນຸດທຳລາຍທຳມະຊາດ ທຳລາຍສິ່ງແວດລ້ອມຫຼາຍ ໂດຍສະເພາະຈາກການປ່ອຍກາສຄາບອນໄດອອກໄຊສູ່ບັນຍາກາດ ມັນກໍເລີຍກາຍເປັນບັນຫາໃຫຍ່ ແນ່ນອນທີ່ສຸດ ຄືມະນຸດກຳລັງນຳຕົນເອງໄປສູ່ການດັບສູນເທື່ອລະເລັກລະນ້ອຍ ຢ່າງຫຼີກລ່ຽງບໍ່ໄດ້.

ອານາຈັກແຫ່ງນີ້ ມີການຜິດແປກແຫວກແນວກັບອານາຈັກອື່ນ ຍ້ອນວ່າພວກປະຊາກອນນິຍົມຍົກຍ້ອງໃຫ້ກຽດເພດຍິງເປັນອັນດັບໜຶ່ງ ພິເສດແມ່ນອົງລາຊີນີ ເຊິ່ງເປັນປະມຸກສູງສຸດ ພວກເຂົາຖືວ່າເປັນສຸພາບສັດຕີໝາຍເລກໜຶ່ງ ເປັນດວງດາວປະຈຳຫົວໃຈຂອງປະຊາກອນ. ໃນຊີວິດຕົວຈິງກໍເປັນເຊັ່ນນັ້ນ ຜ່ານໆມາອານາຈັກທີ່ຄ້າຍຄືກັນນີ້ ຖືກລົ້ມສະຫຼາຍຍ້ອນວ່າລາຊີນີຖືກປອງຮ້າຍ ແລ້ວປະຊາກອນກໍຂາດກຳລັງໃຈ ຂາດສະມາທິແລ້ວຫາຍສາບສູນໄປໃນທຳມະຊາດ. ດັ່ງນັ້ນ ພະນາງຈຶ່ງປຽບເໝືອນເປັນຈຸດລວມແຫ່ງນ້ຳໃຈ ເປັນຜູ້ເຕົ້າໂຮມຄວາມສາມັກຄີ ແລະເປັນດັ່ງໜຶ່ງຜູ້ປະສິດປະສາດພອນໄຊໃຫ້ເຫຼົ່າພະສົກນິກອນຢູ່ເຢັນເປັນສຸກ ໃນອານາຈັກແຫ່ງຄວາມເປັນເອກະພາບແຫ່ງນີ້.

ອົງລາຊາ ເປັນຊາຍອົກສາມສອກ ມີຄວາມປີຊາສາມາດ ເຄີຍນຳກອງທັບປົກປັກຮັກສາອານາຈັກໃຫ້ຫຼຸດພົ້ນຈາກການຮຸກຮານແລະໄພພິບັດທັງຫຼາຍເລື້ອຍມາ. ພະອົງມີຄວາມພາກພູມໃຈໃນພະລາຊະກໍລະນີຍະກິດຂອງອົງລາຊີນີ ທີ່ຍາມໃດກໍຍອມເສຍສະຫຼະຄວາມສຸກສ່ວນຕົວ ເພື່ອຜົນປະໂຫຍດສ່ວນລວມ ຊ່ວຍເຫຼືອຜູ້ຕົກທຸກໄດ້ຍາກ ແລະຊ່ອຍດຶງເອົາຜູ້ທຸກຈົນໃຫ້ຄ່ອຍໆມີຢູ່ມີກິນ ຫຼຸດພົ້ນອອກຈາກຄວາມທຸກຍາກ ເຮັດໃຫ້ຊີວິດການເປັນຢູ່ກ້າວສູ່ຄວາມເປັນປົກກະຕິເທົ່າທຽມຜູ້ອື່ນໆ.

ຈາກການອຸດທິດຢາດເຫື່ອແຮງກາຍ ແຮງໃຈທີ່ບໍ່ມີຍາມເໜືອຍແຫ່ງນີ້ ພະສົກນິກອນຈຶ່ງຖວາຍພະນາມໃຫ້ອົງຍິງວ່າ "ລາຊີນີແຫ່ງຄວາມເອື້ອອາລີ" ຫຼືອີກນາມໜຶ່ງວ່າ "ລາຊີນີແຫ່ງວັງຫວານນ້ຳໃຈຂອງອານາຈັກບິນບິນ" ໃນຍາມມີບຸນປາງໃຫຍ່ ຫຼືໃນຍາມທີ່ສອງພະອົງສະເດັດປະພາດສວນອາດອຸດທິຍານ ຊົມມາລານານາພັນທີ່ກຳລັງເບັ່ງບານສະພັ່ງ ພວກບ່າວໄພ່ພະສົກນິກອນ ຕ່າງກໍມາຫຸ້ມລ້ອມຕິດຕາມພະອົງໄປຢ່າງໃກ້ຊິດເໝືອນທຸກຄັ້ງທີ່ສະເດັດ. ພວກເຂົາບໍ່ພຽງແຕ່ຮັກແພງພະອົງ ຫາກຍັງເປັນຜູ້

ຊອກຫາເຄື່ອງບັນນາການທູນຖວາຍພິເສດ ໂດຍສະເພາະ ນ້ຳທິບແຫ່ງເກລອນ ທີ່ຫອມຫວານຂອງບຸບຜາຊາດເຊິ່ງພະອົງມີຄວາມໂປດປານທີ່ສຸດ.

ວັນໜຶ່ງ ເປັນວັນລ້ຳຕົ້ນຂອງລາຊະສຳນັກ ອົງຍິງ ແລະອົງຊາຍໄດ້ອອກມາສູ່ຫ້ອງພະໂຮງ ເພື່ອຊົງມີກະແສດຳລັດບາງບັນຫາຕໍ່ພະສົກນິກອນ. ອົງລາຊິນີ ໃສ່ຊຸດກະໂປງສີຂາວບ່າໄຫຼ່ເປີດ ແລະມີຍອຍສີຂາວແຊມປະດັບເບິ່ງແລ້ວສະຫວາດຕາ ໜ້າເອິກປະດັບດ້ວຍຫຼຽນໄຊອິດສະລິຍະພອນແກ້ວອັນຍະມະນີທີ່ລວຍງາມ ຄວາມຍາວຂອງກະໂປງເຮັດໃຫ້ນາງສະໜົມສອງຄົນເປັນຄົນຖືຕາມຫຼັງມາ. ມືຂອງພະນາງສຸບດ້ວຍຖົງສີຂາວຍາວກາຍແຂນລອກ.

ສ່ວນຝ່າຍລາຊາ ກໍ່ຊົງເຄື່ອງເຕັມຍົດແປກກວ່າບັນດາຂຸນເສິກຜູ້ອື່ນໆ ດູດັ່ງຈະອອກສະໜາມໄປສູ້ຮົບກັບຂ້າເສິກສັດຕູ. ພະອົງມີຫຼຽນໄຊອິດສະລິຍະພອນຫຼາຍເຕັມໜ້າເອິກ ບົ່ງບອກເຖິງແສນຍານຸພາບເຖິງການອອກສູ້ຮົບມາແລ້ວຫຼາຍຄັ້ງ. ພະອົງຖືດາບ ແລະໃສ່ໝວກນິກທອນ ເບິ່ງແລ້ວບໍ່ຜິດຫຍັງກັບຮູບເຈົ້າຊີວິດແຖບເອີຣົບເມື່ອສະຕະວັດກ່ອນໆ. ອົງລາຊາຢືນຫຼຸດລາຊິນີເລັກນ້ອຍມີຄວາມສະຫງ່າອົງອາດ ດູດັ່ງນັກຮົບຜູ້ທີ່ກຳໄຊຊະນະມາໃໝ່ໆ. ຢູ່ອ້ອມຂ້າງທັງສອງພະອົງກໍ່ຍັງມີພວກມະຫາດເລັກ ເສນາອາມາດ ນາງສະໜົມກົມມະວັງ ທີ່ຄອຍຢືນເຝົ້າປະດັບປາລະມີ. ທັງສອງພະອົງຍ່າງເທິງຜ້າພົມສີແດງຢ່າງເຂັ້ມແຂງ ທ່າມກາງການດີດສີຕີເປົ່າ ຂອງກອງດຸລິຍາງແຫ່ງລາຊະສຳນັກ... ຜູ້ຄົນໄດ້ໃຊ້ສາຍຕາຕິດຕາມພະອົງໃນທຸກອະລິຍະບົດ ແລະໃນທີ່ສຸດທັງສອງພະອົງກໍ່ຢຸດຢູ່ກາງຫ້ອງພະໂຮງ.

ອາມາດຄົນໜຶ່ງ ຍ່າງເຂົ້າໄປໃກ້ໆແລ້ວຊຸເຂົ່າລົງຂ້າງໜຶ່ງຖວາຍລາຊະສານຕໍ່ອົງລາຊິນີ, ພະນາງຈັບຂຶ້ນມາທັງສາຍຕາເຫຼືອດເບິ່ງຂ້າລາຊະບໍລິພານ ແລະພະສົກນິກອນທົ່ວຫ້ອງໂຖງແລ້ວອ່ານສານສະບັບນັ້ນດ້ວຍນ້ຳສຽງອ່ອນນວນແຕ່ສົດໃສ.

"ມື້ນີ້ ພະອົງເຮົາຮູ້ສຶກພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ພ້ອມກັບພວກ
ທ່ານ ສະເຫຼີມສະຫຼອງຄວາມຍິ່ງໃຫຍ່ຂອງອານາຈັກບິນບົນທີ່ມີອາຍຸໄດ້..
ອານາຈັກພວກເຮົາ ເປັນດິນແດນບັ້ງຕັ້ງສົມບູນ ມີຄວາມສະຫງົບໝັ້ນທ່ຽ
ມານານຫຼາຍປີແລ້ວທັງເປັນອານາຈັກທີ່ໃຫ້ກຽດແມ່ຍິງເປັນພິເສດ...ນະໂຍ
ບາຍເອກະພາບ ໄດ້ຮັບການປະຕິບັດຢ່າງກວ້າງຂວາງທົ່ວເຖິງ ຊີວິດການ
ເປັນຢູ່ຂອງພົນລະເມືອງຖືກຮັບປະກັນ. ຄວາມເລື່ອມລ້ຳຕ່ຳສູງຂອງຄົນໃນ
ສັງຄົມ ໄດ້ກາຍເປັນອະດີດໄປ ທຸກຄົນມີສິດສະເໝີພາບ ແລະຊົມໃຊ້ຕາມ
ລັດຖະທຳມະນູນ ແລະກົດໝາຍກຳນົດໄວ້.

ມາເຖິງຊູ່ມື້ນີ້ ສະພາບການຂອງໂລກ ມີຄວາມຫຍຸ້ງຍາກສັບສົນ
ພວກເຮົາຕ້ອງມີສະຕິລະວັງຕົວຢູ່ສະເໝີ ເພາະໄພພິບັດຕ່າງໆອາດຈະເກີ
ຂຶ້ນຢ່າງບໍ່ຮູ້ສຶກຕົວ ເຖິງວ່າພວກເຮົາບໍ່ມີສ່ວນກ່ຽວຂ້ອງກັບການປ່ອຍກາ
ຄາບອນໄດອອກໄຊ ການປ່າຕົ້ນໄມ້ທຳລາຍປ່າຫາຜົນປະໂຫຍດກໍ່ຕາມ
ແຕ່ຍັງມີມະນຸດຈຳນວນໜຶ່ງຢູ່ນອກເຂດແດນເຮົາ ຂາດຄວາມຍັ້ງຄິດ ຕັ້
ໜ້າຕັ້ງຕາໃສ່ຫາປະໂຫຍດຈາກ ໄມ້ ຕັດໄມ້ລົງຈົນແປນເອີດເຕີດ ລົດຄວາ
ອ້ອນຂອງດົງໃຫ້ກາຍເປັນປ່າໂຄກປ່າເລົ່າ ແລະອີກຈຳນວນໜຶ່ງກໍ່ຈູດປ່
ປ່ອຍແກ໊ສຄາບອນໄດອອກໄຊ ຈາກໂຮງຈັກໂຮງງານໃຫ້ຂຶ້ນໄປທຳລາ
ຊັ້ນໂອໂຊນ ອັນເຮັດໃຫ້ໂລກຮ້ອນ ແລ້ວເກີດມີໄພທຳມະຊາດຕ່າງໆຕາມ
ມາເຊັ່ນ: ພາຍຸແລ້ງ ພາຍຸລົມ (ທໍ່ນັນໂດ ເຮລິແຄນ ງວງຊ້າງ ມໍລະສຸມ...
ພາຍຸຝົນ (ນ້ຳຖ້ວມໃຫຍ່ຫຼາຍພື້ນທີ່ໃນໂລກ )ແລະອື່ນໆທີ່ຈະຕ້ອງກຽມພ້ອມ
ຢ່າງມີສະຕິຕອບຕ້ານໃຫ້ໄດ້ ບໍ່ດັ່ງນັ້ນ ຈະພົບກັບການສູນເສຍຢ່າງຍິ່ງໃຫຍ
ດັ່ງນັ້ນ ຜົນໄດ້ຮັບແມ່ນມະນຸດກຸ່ມໜຶ່ງຮັບຜົນປະໂຫຍດໄປ ແຕ່ຜົນສະທ້ອນ
ຕາມມາຊ້ຳພັດຖືກແບ່ງພູດໄປຈົນຄົບບໍ່ວ່າຈະເປັນມະນຸດ ກໍ່ຄືສັດເດຍລະ
ສານເພາະພວກເຮົາ ແລະເຂົາອາໄສຢູ່ໃນໂລກໜ່ວຍດຽວກັນທັງນັ້ນ.

ໃນຂະນະທີ່ອ່ານບົດປາໄສຢ່າງເຄັ່ງຂຶມ ທະຫານອົງຄະລັກທີ່ປະຈຳການດ້ານນອກ ໄດ້ຮັບລາຍງານຈາກຊາຍແດນແລ້ວແລ່ນຕາຕີ່ຕາລານມາສູ່ຫ້ອງພະໂຮງເພື່ອຖວາຍລາຍງານດ່ວນໂດຍບໍ່ຜ່ານເລຂາທິການພະລາຊະວັງ.

" ຂໍກາບບັງຄົມທູນ ອົງສົມເດັດພະລາຊິນີ ແລະ ອົງລາຊາ, ປັດຈຸບັນຢູ່ຊາຍແດນພຸ້ນ ມີເລື່ອງເດືອດຮ້ອນ ເພາະມະນຸດຕ່າງດາວຕົວໃຫຍ່ດຳຄຶກມືກ ດັ່ງສີຂາວມັກກິນຂອງຫວານບຸກເຂົ້າມາທຳລາຍກຳແພງຍັກ ຂອງອານາຈັກເຮົາ. ເຂົາເປັນຕົວປະຫຼາດຄ້າຍບໍ່ມີຈິດວິນຍານ. ຈະໃຫ້ກອງທັບເຮົາເຮັດແນວໃດ..ຂໍກະແສຮັບສັ່ງຈາກພະອົງ.

ລາຊິນີຫຼຽວເບິ່ງຜູ້ທູນລາຍງານ, ນາງຖົກກະໂປງຂຶ້ນນ້ອຍໜຶ່ງ ແລ້ວປຶກສາພະສາມີ

" ຈະເຮັດແນວໃດ ສະເດັດອ້າຍ?"

ພະລາຊາງຶກຫົວສອງສາມບາດ ເໝືອນຮັບຊາບເຫດການ ຈາກລາຍງານ ພະອົງຍ່າງໄປປຶກສາອາມາດຜູ້ໃກ້ຊິດອີກຄົນໜຶ່ງແລ້ວຍ່າງມາຢືນຢູ່ບ່ອນເກົ່າ. ຈາກນັ້ນພະອົງກໍກະຊິບເບົາໆຢູ່ຂ້າງຫູລາຊິນີ.. ຕໍ່ມາອົງຍິ່ງກໍກ່າວຢ່າງເປີດເຜີຍຕໍ່ພະສົກນິກອນ ເນື່ອງຈາກເຫດການດັ່ງກ່າວນີ້ມີຄົນຮູ້ຫຼາຍແລ້ວ.

"ພະສົກນິກອນທັງຫຼາຍເອີຍ... ພວກທ່ານບໍ່ຕ້ອງຕົກໃຈ ອານາຈັກພວກເຮົາດຳເນີນນະໂຍບາຍຝັກໄຝ່ໃນສັນຕິພາບ ບໍ່ມີການພະເຊີນໜ້ານີ ແນວທາງນະໂຍບາຍຕ່າງປະເທດຢູ່ຮ່ວມກັນໂດຍສັນຕິ ເຊິ່ງແມ່ນທ່າອຽງທົ່ວໄປແຫ່ງຍຸກສະໄໝຂອງໂລກ. ບັນຫາການອົດກັ້ນໃຊ້ກຳລັງແມ່ນເລື່ອງດີ ເຮົາຂໍຕັດວ່າ ກອງທັບເຮົາຈົ່ງນອກກຳລັງຕ່າງແດນ ຂອງທ່ານໜີທີ່ມີຢືນກິນເຜິ້ງດັ່ງນີ້:

ຂອງເຮົາ ... ແລະບໍ່ມີຂໍ້ຕໍ່ລອງໃດໆ.

-ຈົ່ງອອກຈາກຊາຍແດນເຮົາໂດຍດີ ແລະບໍ່ມີຂໍ້ຕໍ່ລອງໃດໆ.

-ໃນກໍລະນີເຂົາຍັງສືບຕໍ່ລ່ວງລ້ຳອະທິປະໄຕ ເຮົາຈຶ່ງຕັດສິນໃຈປົ

ປັກຮັກສາເຂດນ້ຳແດນດິນຢ່າງເດັດຂາດ.

ເມື່ອຟັງກະແສ ພະລາຊະດຳລັດ ທະຫານດັ່ງກ່າວກໍກັບໄປຍັງຊາຍ

ແດນຢ່າງວ່ອງໄວ ທັງກຽມພ້ອມສູ້ຮົບເມື່ອການເຈລະຈາແບບສັນຕິວິທີໄ

ປະສິດທິຜົນ...ພຽງໄລຍະສັ້ນໆ ໂທລະເລກດ່ວນຈາກຊາຍແດນກໍມາເຖິ

ສຳນັກລາຊະວັງໂດຍລາຍງານທະຍັ້ມີໃຈຄວາມວ່າ "ຂ້າເສິກໄດ້ຖອຍໜີໄ

ແລ້ວ"

ພະລາຊາພິທີຍັງມີຕໍ່ ພະລາຊີນີສືບຕໍ່ອ່ານສານ ຜູ້ຄົນທີ່ມາໃນງາ

ຍັງມິດບໍ່ປາກ ແລະຕັ້ງໃຈຟັງຢ່າງຈົດຈໍ່.

"ຈາກລະພາບແວດລ້ອມຖືກທຳລາຍ..ລະບົບອຸດສາຫະກຳໃນທົ່ວ

ໂລກມີການຂະຫຍາຍຕົວ ໃນຂະນະດຽວກັນຄວັນອາຍເສຍເຊິ່ງແມ່ນຄາ

ບອນໄດອອກໄຊຈາກໂຮງຈັກໂຮງງານ ຈາກລົດຍົນ ຕະຫຼອດເຖິງການຈູດ

ເຜົາປ່າໄມ້ ກາຍເປັນມົນລະພິດ ປິວໄປໃນອາກາດ ແລະປິວຂຶ້ນທຳລາຍຊັ້

ໂອໂຊນໃຫ້ເປັນຮູກວ້າງ ອັນເຮັດໃຫ້ລັງສີອັນຕຣາວີໂອເລັດຮົ່ວລົງມາສູ່

ໂລກເກີນຄວາມຈຳເປັນ ສິ່ງຜົນສະທ້ອນເຮັດໃຫ້ໂລກຮ້ອນ ນ້ຳກ້ອນຂົ້ວ

ໂລກເປື່ອຍ ແລະເຮັດໃຫ້ເກີດມີໄພທຳມະຊາດຕ່າງໆຮຸນແຮງຂຶ້ນ ທຳລາຍຊີ

ວິດ ແລະຊັບສິນນອນມະນຸດເສຍຫາຍມະຫາສານ... ນອກຈາກໄພທຳມະ

ຊາດ ຫຼືອຸປະຕິໄພຕ່າງໆທີ່ມາກັບໂລກຮ້ອນແລ້ວ ພະຍາດບາດເຍັບບາ

ແນວກໍມີການຂະຫຍາຍຕົວຢ່າງວ່ອງໄວ ທັງມີຊະນິດໃໝ່ໆທີ່ພັດທະນາ

ສາຍພັນໃໝ່ມາພ້ອມອີກ"

ພະສີການິກອນຟັງແລ້ວຮູ້ສຶກອະເຫຼືອງຄຶງ ບາງຄົນຂົນຄິ້ງລຸ

ພາກໜາວແຕກເຍືອກງກໍມີ ເພາະວ່າບໍ່ຮູ້ເຖິງອະນາຄົດຖ້າ ໂລກຮ້ອນໜັ

ໜ້າຕໍ່ໄປມະນຸດໄປສູ່ຈຸດໃດກັນແທ້ ໃນໃຈພໍ່ຢາກຂຶ້ນຊົກມວຍກັບຜູ້ທຳລາຍສິ່ງແວດລ້ອມທີ່ເປັນຕົ້ນເຫດສ້າງໃຫ້ໄພພິບັດເກີດມາໃນໂລກໜ່ວຍນີ້.

ເມື່ອລາຊີນີເວົ້າເຖິງຈຸດນີ້ ລະເບີດກໍດັງຂຶ້ນຢູ່ຂ້າງນອກຫ້ອງໂຖງ ຄວັນໄຟໜາດຳໄຫຼເຂົ້າປະຕູຫ້ອງພະໂຮງ..ຄວັນພ້ອມກິ່ນຂີ້ວນັ້ນໄດ້ປິວເຂົ້າຕາເຂົ້າປາກຜູ້ຄົນເຊິ່ງເຮັດໃຫ້ກາຍເປັນເຫດການຊຸນລະມຸນວຸ້ນວາຍຢ່າງໃຫຍ່..ພ້ອມກັນນັ້ນກໍມີສຽງໄອ ສຽງຈາມພິດສະໜັ່ນພໍປານນັດກັນ. ສັນຍານເຕືອນລະວັງໄພດັງແຮງ 3 ບາດຊ້ອນ ເພື່ອເຕືອນຜູ້ຄົນແວດລະວັງພາວະສຸກເສີນ.

"ເລີກພິທີ..ເລີກພິທີ"

ພະລາຊາສັ່ງການໃນທ່າມກາງຄວາມມືດມົວ. ຢູ່ປາກວັງພຸ້ນມີໄຟກອງຮ້າລຸກໄໝ້ເປັນແປວ ພົນລະເມືອງດີຖືກດູດເຂົ້າໄຟກອງນັ້ນຄົນແລ້ວຄົນເລົ່າ. ອານາຈັກບິນບົນເກີດວິກິດການ ຍ້ອນຖືກສັດຕູຈອບສວຍໂອກາດຍາມເຜີ. ປະຊາກອນຈຳນວນໜຶ່ງແລ່ນຕາຕື່ຕາລານແຕກລະຫຼຸຜູ່ຜ່າຍປົບໜີ. ສຽງຮ້ອງໄຫ້ຄອນຄາງຢ່າງເຈັບປວດ ບອກກັບຄວາມໂກລາຫົນທາທີ່ຈັ່ງບໍ່ໄດ້ ເຮັດໃຫ້ສະພາບການຕົກເປັນຮອງຕໍ່ຝ່າຍກົງກັນຂ້າມ. ແຕ່ປານນັ້ນການຕໍ່ສູ້ຢ່າງພິລາດອາດຫານນຳໂດຍລາຊີນີ ຄຽງບ່າຄຽງໄຫຼ່ກັບພະລາຊາ ແລະຊຸມເສີກຄົນກ້າຍັງດຳເນີນຕໍ່ໄປຢ່າງດຸເດືອດ.

"ແຜ່ນດິນນີ້ແມ່ນຂອງເຮົາ ເຮົາຕ້ອງສູ້ ເພື່ອປົກປັກຮັກສາໃຫ້ໄດ້"

ລາຊີນີ ສັ່ງທັງຍິງອາວຸດເຂົ້າສັງຫານສັດຕູ ແລະພະນາງຍັງເດັດດ່ຽວສ່ຽງຊີວິດເຂົ້າໄປຊ່ວຍເຫຼືອພະສົກນິກອນທີ່ຖືກຕ້ອນເຂົ້າຈົນມູມຕໍ່ກອງໄຟ. ເວລານີ້ ທັງສອງພະອົງລ້ວນແຕ່ສວມບົດບາດການນຳ ທີ່ມີຄວາມຮັບຜິດຊອບສູງ ເປັນແບບຢ່າງຕໍ່ສູ້ກັບສັດຕູທີ່ມາຮຸກຮານ.

ໄຟຍັງລຸກໄໝ້ອ້ອມວັງ ແລະມີທ່າທີວ່າສັດຕູເຈາະຈົງຈະຈູດວັງໃຫ້ໄດ້...ມະນຸດທີ່ມີສົມຍານາມສັດປະເສີດຍັງຄົງກຳຮາບນາບຂູ່ພົນລະເມືອງຕົວນ້ອຍໆແຫ່ງອານາຈັກບິນບິນຕໍ່ໄປ

"ມຶງເສັດແທ້ໆ ບໍ່ເສັດບາດນີ້ມຶງຊິເສັດບາດໃດບັກເຜິ້ງ.. ກູລວຍ ກູລວຍເລະ ນ້ຳເຜິ້ງເດືອນຫ້າລາຄາດີ"

"ບິນບິນໆໆ"

ມະນຸດຜູ້ໜຶ່ງເອີ່ຍຂຶ້ນ ໃນຂະນະທີ່ມືຂອງເຂົາເອົາຫຼົວຕິດໄຟຊູດໃຫຍ່ແຍ່ເຂົ້າອານາຈັກບິນບິນເພື່ອປາບປາມການຕໍ່ສູ້ຕ້ານຄືນຂອງປະຊາກອນເຜິ້ງ ເພື່ອສິ່ງດຽວຄືຄວາມຢາກໄດ້ນ້ຳເຜິ້ງເດືອນຫ້າໄປຂາຍ.

ປະຊາກອນຂອງອານາຈັກບິນບິນ ຖືກດູດເຂົ້າກອງໄຟເປັນສ່ວນໃຫຍ່ ຈຳນວນໜຶ່ງສະມັກຄວັນ ແລະຮັບບາດເຈັບ ພະລາຊາພ້ອມລາຊີນີ ຍັງສືບຕໍ່ສູ້ຢ່າງບໍ່ໜີໜ້າ...ແຕ່ຍ້ອນຄວາມອິດເມື່ອຍໂຮຍແຮງ ຈາກຄວາມຮຸນແຮງຂອງອຳນາດພະເພີງພິໂລດເຮັດໃຫ້ປະຊາກອນຖືກດູດເຂົ້າກອງໄຟເປັນສ່ວນຫຼາຍ. ລາຊີນີຮ້ອງໄຫ້ຮ່ຳໄຮທັງເຈັບທັງເສຍໃຈ ທີ່ຕົນບໍ່ສາມາດກອບກູ້ເອົາອານາຈັກນ້ອຍໆໃຫ້ຫຼຸດພົ້ນຈາກອັງມືມານໄດ້ ຕົນຕົວທີ່ຊົງດ້ວຍອາພອນສວຍງາມຖືກປຸ່ງແທນດ້ວຍຄາບເປື້ອນຄວັນດຳ ແລະເລືອດ..ອາການຄືນສະໜິດໄດ້ເຂົ້າມາປອບໃຈ ແລະຊວນພະນາງອອກໜີໄປສູ່ບ່ອນປອດໄພ ເພາະແນວໃດຝ່າຍກົງກັນຂ້າມກໍມີອາວຸດເໜືອກວ່າ.

"ຂ້າພະເຈົ້າບໍ່ໜີ ຈະຕໍ່ສູ້ຢຽງບ່າຢຽງໄຫຼ່ກັບພະສົກນິກອນຈົນເຖິງທີ່ສຸດ" ເວົ້າແລ້ວນາງກໍກັບໄປສູ່ສະໜາມຮົບທີ່ຍັງຄົງສືບຕໍ່ພິດເດືອດ.

" ບິນບິນໆ ນ້ຳເຜິ້ງເດືອນຫ້າຫວານກູລວຍແທ້ໆ"

ສຽງນາບຂູ່ຂອງມານຮ້າຍຍັງຄົງດັງຕໍ່ໄປ ເພື່ອລະດົມຕົນເອງໃຫ້ມີກຳລັງໃຈ.

"ເຮົາຈະຕາຍຮ່ວມກັນ ຜູ້ຈະທີ່ເບິ່ງຕົວເອງ"

ພະລາຊີນີ ຕັ້ງຄຳຖາມຕໍ່ຕົນເອງ.

"ບໍ່ແມ່ນໆ ເຮົາບໍ່ແມ່ນຄົນເຫັນແກ່ຕົວ ທີ່ຈະເບິ່ງຕົວເອງເປັນຫລັກ ດີ...ຍາມສຸກເຮົາຮ່ວມກັນຢູ່ໃນໃນສຸກ.. ເວລາທຸກມີເຂົ້າຫຍຸ້ງຍາກຈະໜີໄປຕາມເຂົ້າ ຫວຍ...ບໍ່ແມ່ນໆເຮົາບໍ່ແມ່ນຄົນຂີ້ຢ້ານ ເຮົາແມ່ນສຸພາບສັດທີ່ຫາຍໃຈເພື່ອ ຂອງປະເທດ".

ພະນາງບອກລົບຖຸມທານ ແລ້ວກັດແຂ້ວສູ້ຕໍ່ໄປຄູ່ກັບພະລາຊາ ບັນດາປະຊາກອນຍັງຄົງສັດທາໃນນ້ຳພະໄທຂອງນາງ ເຖິງແມ່ນວ່າອານາຈັກປົບບັນຂອງປະຊາກອນເຜິ້ງຈະສິ້ນສຸດລົງໃນການແປວໄຟ ແຕ່ລາຊີນີເຜິ້ງຍັງຄົງຮັກສາຕຳນານຄືນຳພາຝູງເຜິ້ງທາວຮັງຂອງຕົນຕໍ່ໄປ ແລະປະຊາກອນເຜິ້ງກໍເຄົາລົບນັບຖືລາຊີນີບໍ່ຍອມໜີຫ່າງ. ເວລານັ້ນ ຍັງຄົງໄດ້ຍິນສຽງມະນຸດຜູ້ທີ່ເຫັນແກ່ຢາກໄດ້ທີ່ເວົ້າວ່າ:

" ນ້ຳເຜິ້ງເດືອນຫ້າ ລາຄາດີ"

